ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**************************

ກະຊວງກະສິກຳ ແລະ ປ່າໄມ້
ໂຮງຮຽນກະສິກຳ ແລະ ປ່າໄມ້

ສະຖານທີ່ລົງຝຶກງານ
ສູນຄົ້ນຄວ້າປ່າໄມ້ ນ້ຳຊ່ວງ

# ບົດລາຍງານ

## ວ່າດ້ວຍ

## ເຕັກນິກການຂະຫຍາຍພັນດອກເຈັ່ຍ

ຂຽນໂດຍ : ນາງ ວົງເດືອນ ວົງສາຄຳຜຸຍ
ນັກສຶກສາລຸ້ນທີ XVI
ຊີ້ນຳໂດຍ : ທ່ານ ນ. ເທວາ ອຸ່ນແກ້ວມະນີ
ທ່ານ ບົວລີ ຂັນທະມູນ

ສົກສຶກສາ 2000-2003

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**************************


ກະຊວງກະສິກຳ ແລະ ປ່າໄມ້

ໂຮງຮຽນກະສິກຳ ແລະ ປ່າໄມ້

ສະຖານທີ່ລົງຝຶກງານ

ສູນຄົ້ນຄວ້າປ່າໄມ້ ນ້ຳຊ່ວງ


# ບົດລາຍງານ

ວ່າດ້ວຍ

# ເຕັກນິກການຂະຫຍາຍພັນດອກເຈ້ຍ


ຂຽນໂດຍ : ນາງ ວົງເດືອນ ວົງສາຄຳຜຸຍ

ນັກສຶກສາລຸ້ນທີ XVI

ຊີ້ນຳໂດຍ : ທ່ານ ນ. ເທວາ ອຸ່ນແກ້ວມະນີ

ທ່ານ ບົວລີ ຂັນທະມູນ


ສົກສຶກສາ 2000-2003

# ຄຳຂອບໃຈ

ຂ້າພະເຈົ້າ ນ. ວົງເດືອນ ວົງສາຄຳພຸຍ ເຊິ່ງເປັນນັກຮຽນປີສຸດທ້າຍລຸ້ນທີ່ 16 ຂອງໂຮງຮຽນກະສິກຳແລະປ່າໄມ້ຊັ້ນກາງ ນ້ອງເອງແມ່ນໄດ້ຮຽນຮູ້ຫຼາຍຢ່າງຈາກສະຖາບັນແຫ່ງນີ້. ສະນັ້ນຈຶ່ງຖືໂອກາດນີ້ສະແດງຄວາມມຮູ້ບູນຄູນຢ່າງຫຼົ້ນເຫຼືອ ແລະ ຂໍຂອບໃຈຢ່າງສູງມາຍັງພາກສ່ວນຕ່າງໆທີ່ກ່ຽວຄ້ອງໃນການຮຽນ ແລະ ລົງຝຶກຫັດທ້າຍປີຈົນສາມາດປະກອບເປັນບົດທີ່ສົມບູນໄດ້ມີລາຍລະອຽດດັ່ງລູ່ມນີ້:

ຂໍສະແດງຄວາມຮູ້ບູນຄຸນຢ່າງສູງ ແລະ ຂໍຂອບໃຈນຳກະຊວງກະສິກຳ ແລະ ປ່າໄມ້ທີ່ໄດ້ໃຫ້ທຶນກ່ຽວກັບການສຶກສາແກ່ຂ້າພະເຈົ້າຕະຫຼອດ 3 ປີເຕັມ

ຂໍສະແດງຄວາມຮູ້ບູນຄຸນຢ່າງຍິ່ງແລະຂໍຂອບໃຈຢ່າງສູງຕໍ່ທ່ານອາຈານ ວິລະວົງ ພັນທະລັງສີ ຜູ້ອຳນວຍການພ້ອມດ້ວຍຄະນະແລະພະນັກງານ ຄູອາຈານ ທີ່ໄດ້ສິດສອນທາງດ້ານທິດສະດີແລະພາກປະຕິບັດຕົວຈິງແລະໄດ້ຖ່າຍທອດຄວາມຮູ້ຄວາມສາມາດແລະໄດ້ຊ່ວຍເຫຼືອດູແລ ເບິ່ງແຍງມາຕະຫຼອດໃນຊ່ວງເວລາ 3 ປີເຕັມ ທີ່ຂ້າພະເຈົ້າໄດ້ສຶກສາຢູ່ໂຮງຮຽນແຫ່ງນີ້.

ຂໍສະແດງຄວາມຮູ້ບຸນຄຸນຢ່າງລົ້ນເຫຼືອມາຍັງທ່ານ ຄຳໄພ ມະນີວົງ ຫົວໜ້າຄົ້ນຄ້ວາປ່າໄມ້ພ້ອມດ້ວຍຄະນະແລະພະນັກງານໜົດທຸກຄົນພາຍໃນສູນທີ່ອຳນວຍຄວາມສະດວກຕ່າງໆໃນການລົງຝຶກຫັດຂອງຂ້າພະເຈົ້າ ແລະໄດ້ຊີ້ນຳ ນຳພາເຕັກນິກວິຊາການ

ພິເສດຂໍສະແດງຄວາມຮູ້ບຸນຄຸນຢ່າງສູງຕໍ່ ທ່ານ ດຣ ຜູຍ ວົງຄຳຈັນແລະ ທ່ານ ອາຈານ ສົມສະມຸດ ພຸດທະວົງທີ່ເປັນຜູ້ຊີ້ນຳແລະໃຫ້ຄະແນນກ່ຽວກັບການຂຽນບົດລາຍງານສະບັບນີ້

ຂໍສະແດງຄວາມຮູ້ບຸນຄຸນຢ່າງສູງຕໍ່ ທ່ານ ພອນສະຫວັນ ມະນີວົງ ທີ່ເປັນຜູ້ແນະນຳ ແລະກວດກາກ່ຽວກັບການຂຽນບົດລາຍງານໃນຄັ້ງນີ້.

ອີກເທື່ອນຶ່ງຂໍສະແດງຄວາມຂອບໃຈຕໍ່ບັນດາ ທ່ານ ນ. ເທວາ ແກ້ວອຸ່ນມະນີ ແລະ ທ່ານ ບົວລີ ຂັນທະມູນ ທີ່ໄດ້ຊ່ວຍເຫຼືອໃນການທົດລອງ ແລະ ຂຽນບົດລາຍງານສະບັບນີ້.

ສູນຄົ້ນຄວ້າປ່າໄມ້
ຫໍສະໝຸດ
ເລກທະບຽນ: 0445
ເວລາຢູ່ໃນຫ້ອງ:
ວັນທີ: 26-7-07

ຂໍຂອບໃຈ ແລະ ຮູ້ບຸນຄຸນຢ່າງສູງຕໍ່ຄອບຄົວ (ພໍ່ .ແມ່ .ອ້າຍ.ເອື້ອຍ.ນ້ອງ ) ພ້ອມດ້ວຍໝູ່ຄູ່ໝົດທຸກຄົນ ທີ່ໄດ້ສະໜອງທຶນຮອນ, ກຳລັງໃຈ ແລະ ຄຳແນະນຳໃຫ້ແກ່ການສຶກສາຮ່ຳຮຽນພ້ອມດ້ວຍການລົງຝຶກຫັດ ແລະ ການຂຽນບົດໃນຄັ້ງນີ້ໃຫ້ສສຳເລັດຜົນດ້ວຍດີ

ຕໍ່ກັບບູນຄຸນດັ່ງກ່າວນີ້ຂ້າພະເຈົ້າບໍ່ຮູ້ວ່າຈະຕອບບູນແທນຄູນແນວໃດດີຈຶ່ງຈະໝົດມີແຕ່ຄຳອວຍພອນ ແລະ ຄຳຂອບໃຈທີ່ບັນຍາຍລົງນີ້.

ສຸດທ້າຍຂໍອວຍພອນຕໍ່ທຸກທ່ານທີ່ໄດ້ໃຫ້ການຊ່ວຍເຫຼືອຂ້າພະເຈົ້າຈຶ່ງປະສົບແຕ່ຜົນສຳເລັດໃນວຽກງານ ແລະ ມີຄວາມສຸກຄວາມຈະເລີນຕະຫຼອດໄປ.

# ສາລະບານ

ເລກໜ້າ


ຄຳຂອບໃຈ ii

ສາລະບານຕາຕະລາງ iii

ສາລະບານຮູບພາບ iv

ບົດຄັດຫຍໍ້ v

ພາກທີ I. ພາກສະເໜີ.

1.1. ສະພາບລວມ 1

1.2. ຈຸດປະສົງ 3

ພາກທີ II. ພາກທົບທວນເອກະສານ

2.1 ປະຫວັດ ແລະ ຖິ່ນກຳເນີດຂອງດອກເຈັ້ຍ 4

2.2 ລັກສະນະພັນຂອງດອກເຈັ້ຍ 4

2.2.1 ລັກສະນະພັນຂອງດອກເຈັ້ຍພັນປະສົມ 5

2.2.2 ລັກສະນະພັນຂອງດອກເຈັ້ຍພັນພື້ນເມືອງ 7

2.3 ລັກສະນະພັນຂອງດອກເຈັ້ຍ 8

2.4 ຄວາມສຳຄັນແລະຄຸນປະໂຫຍດຂອງດອກໄມ້ 11

2.4.1 ຄວາມສຳຄັນ 11

2.4.2 ຄຸນປະໂຫຍດ 12

ພາກທີ III. ອຸປະກອນ ແລະ ວິທີການ

3.1. ອຸປະກອນຮັບໄຊ

3.2 ວິທີການ

3.2.1 ສະຖານທີ່ການສຶກສາ 18

3.2.1.1 ປະຫັວດຄວາມເປັນມາຂອງສູນຄົ້ນຄ້ວາປ່າໄມ້ 18

3.2.1.2 ທີ່ຕັ້ງແລະຂອບເຂດຊາຍແດນ 19

3.2.1.3 ໂຄງຮ່າງການຈັດຕັ້ງຂອງສູນຄົ້ນຄ້ວາປ່າໄມ້

3.2.2. ການອອກແບບທົດລອງ

3.2.2.1. ການຂະຫຍາຍພັນດອກເຈ້ຍດ້ວຍການປັກຊໍາ 23

3.2.2.2. ການກຽມເຮືອນຮົ່ມ 23

3.2.2.3. ການກຽມດິນສໍາລັບຮ່າຍເບົ້າ 24

3.2.2.4. ການຮ່າຍເບົ້າ 25

3.2.2.5. ການກຽມກິ່ງພັນສໍາລັບປັກຊໍາ 26

3.2.2.6. ວິທີການປັກຊໍາ 27

3.2.2.7. ການບົວລະບັດຮັກສາ 28

3.2.2.8. ການຂະຫຍາຍພັນດອກເຈ້ຍດ້ວຍການລຽບຍອດ 29

3.2.2.9. ການກຽມຕົ້ນຕໍດອກເຈ້ຍ 29

3.2.2.11. ຂັ້ນຕອນປະຕິບັດ 30

3.2.2.12. ການຂະຫຍາຍພັນດອກເຈ້ຍດ້ວຍການຕິດຕາ 31

3.2.2.13. ການກຽມຕົ້ນຕໍ ແລະກິ່ງພັນ 3[illegible]

3.2.2.14. ຂັ້ນຕອນ ແລະວິທີການປະຕິບັດ 3[illegible]

3.2.2 ການເກັບກໍາຂໍ້ມູນ 36

3.2.3 .1.ເປີເຊັນລອດຕາຍ 37

3.2.4 ການວິເຄາະຂໍ້ມູນ 37

ພາກທີ IV. ຜົນໄດ້ຮັບ ແລະ ການສົນທະນາ

4.1 ຜົນໄດ້ຮັບ 38

4.1.1 ຜົນໄດ້ຈາກການທົດລອງຂະຫຍາຍພັນດອກເຈ້ຍດ້ວຍ 3 ວິທີ: 38

4.1.2 ການໄລ່ລຽງເສດຖະກິດ 39

4.2. ການສົນທະນາ 42

ພາກທີ V. ການສະຫຼູບ ແລະ ການແນະນຳ

5.1. ການສະຫຼູບ 43
5.2. ການແນະນຳ 44
ເອກະສານອ້າງອີງ
ເອກະສານແນບທ້າຍ
ປະຫວັດຫຍໍ້

## ສາລະບານຕາຕະລາງ


1. ຜົນໄດ້ຮັບຈາກການທົດລອງ 39
2. ລາຍຈ່າຍ 40
3. ລາຍຮັບ 41

## ສາລະບານຮູບ


| | | |
|---|---|---|
| 1. | ດອກເຈ້ຍພັນປະສົມ | 5 |
| 2. | ດອກເຈັບພັນພື້ນເມືອງ | 7 |
| 3. | ອຸປະກອນ | 14 |
| 4. | ອັດຕາດິນ ແລະ ຊາຍ | 24 |
| 5. | ການຮ່າຍເບົ້າ | 25 |
| 6. | ການກຽມກິ່ງພັນສໍາລັບປັກຊໍາ | 26 |
| 7. | ການປັກຊໍາ | 27 |
| 8. | ການທົດນໍ້າ | 28 |
| 9. | ກບາດຂອງການສຽບຍອດ | 31 |
| 10. | ການຄຽນເທບໃຫ້ປາກບາດ | 31 |
| 11. | ການເອົາຖົງຢາງງອມ | 32 |
| 12. | ການໄຊ້ເຈັບງອມ | 33 |
| 13. | ປາກບາດຂອງຕົ້ນຕໍ ແລະ ແຜ່ນຕາ | 35 |
| 14. | ການໄຊ້ເທບຄຽນປາກບາດ | 36 |

# ບົດຄັດຫຍໍ້

ໄມ້ປະດັບເປັນພືດທີ່ມີຄວາມສຳຄັນໃນລະບົບນິເວດກໍ່ຄືທາງດ້ານຄວາມສວຍງາມໃນດ້ານການປະດັບເອ້ຕ່າງໆ ແລະກໍ່ເປັນສ່ວນນຶ່ງທີ່ສາມາດສ້າງລາຍໄດ້ໃຫ້ກັບປະຊາຊົນບໍ່ຫຼາຍກໍ່ໜ້ອຍ. ໂດຍສະເພາະແມ່ນດອກເຈັຍ.ເຊິ່ງໃນປະຈຸບັນນີ້ເຮົາສັງເກດເຫັນວ່າຕາມຮ້ານຂາຍໄມ້ປະດັບທົ່ວໄປມັກຈະເຫັນຕົ້ນດອກເຈັຍວາງຂາຍເປັນຈຳນວນຫຼວງຫຼາຍ.ດັ່ງນັ້ນການລົງຝຶກຫັດຫົວຂໍ້ກ່ຽວກັບເຕັກນິກການຂະຫຍາຍພັນຕົ້ນດອກເຈັຍຢູ່ສູນຄົ້ນຄວ້າປ່າໄມ້ເຊິ່ງຕັ້ງຢູ່ ບ້ານໂພນທອງ ເມືອງນາຊາຍທອງ ແຂວງກຳແພງນະຄອນ ເຊິ່ງມີຈຸດປະສົງສຶກສາກ່ຽວກັບເຕັກນິກການຂະຫຍາຍພັນດອກເຈັຍ ສຶກສາກ່ຽວກັບເປີເຊັນລອດຕາຍຂອງການທົດລອງ ແລະ ສຶກສາກ່ຽວກັບການໄລ່ລຽງເສດຖະກິດໃນການຜະລິດດອກເຈັຍ ເຊິ່ງໄດ້ທົດລອງຢູ່ 3 ວິທີດ້ວຍກັນມີຈຳນວນກິ່ງໄມ້ທັງໝົດ 90ກິ່ງ ລອດຕາຍຢູ່ 70ກິ່ງທົດລອງການສຽບຍອດມີຈຳນວນກິ່ງໄມ້ 30ກິ່ງຕາຍ 5 ກິ່ງ ລອດຕາຍ 25 ກິ່ງ. ປັກຊຳຈຳນວນ 50 ກິ່ງ ຕາຍ 10 ກິ່ງ ລອດຕາຍຢູ່ 40 ກິ່ງ. ຕິດຕາ ຈຳນວນ 10 ກິ່ງ ຕາຍ 5 ກິ່ງ ລອດຕາຍ 5 ກິ່ງ ເປີເຊັນລອດຕາຍຂອງແຕ່ລະວິທີມີຄື:ສຽວຍອດ 83.33% ; ປັກຊຳ 80%; ຕິດຕາ 50% ;ຜ່ານການໄລ່ລຽງເສດຖະກິດແລ້ວເຫັນວ່າ: ການສຽບຍອດ. ຕິດຕາ ລາຄາເຕົ້າລະ 20000ກີບ. ປັກຊຳລາຄາເຕົ້າເລະ3000ກີບ

# ພາກທີ I

# ພາກສະເໜີ

## 1.1 ສະພາບລວມ

ໄມ້ປະດັບເປັນພືດທີ່ມີຄວາມສຳຄັນ ໃນລະບົບນິເວດກໍ່ຄືທາງດ້ານຄວາມສວຍງາມ ໃນດ້ານການປະດັບປະດາເອີ້ຍ້ອງຕ່າງໆ ແລະກໍ່ເປັນສ່ວນນຶ່ງທີ່ສາມາດສ້າງລາຍໄດ້ໃຫ້ກັບປະຊາຊົນບໍ່ຫຼາຍກໍ່ນ້ອຍ. ພືດປະດັບສາມາດເກີດຂື້ນໄດ້ ແລະ ຂະຫຍາຍຕົວໄດ້ດີແມ່ນຂຶ້ນກັບແຕ່ລະຊະນິດພັນ. ບາງສະນິດມີຂະໜາດຂອງຊົງພູ່ມໃຫ່ຍແລະສູງ ບາງສະນິດຂະໜາດຂອງຊົງພູ່ມນ້ອຍ ແຕ່ການປູກແລະການບົວລະບັດຮັກສາໄມ້ປະດັບຍັງມີນ້ອຍ ຍ້ອນຍັງຂາດການຂະຫຍາຍພັນ ແລະບໍ່ເຫັນຄວາມສຳຄັນຂອງມັນ. ເພາະພືດ ແລະໄມ້ປະດັບສ່ວນຫຼາຍແມ່ນອາໃສພາກສ່ວນຕ່າງໆຂອງລຳຕົ້ນໃນການຂະຫຍາຍພັນ ໂດຍສະເພາະແມ່ນຕົ້ນດອກເຈ້ຍ ຖ້າຄົນເຮົາບໍ່ຂະຫຍາຍຫຼືບົວລະບັດຮັກສາໄວ້. ໄມ້ປະດັບດັ່ງກ່າວກໍ່ຈະຫຼຸດນ້ອຍຖອຍລົງຫຼືສູນພັນໄປ ອີກຢ່າງເຮົາເຄີຍເຫັນໄມ້ປະດັບຫຼາຍຊະນິດທີ່ໄດ້ຮັບຄວາມນິຍົມສູງ ເຊິ່ງເຮົາຈະສັງເກດເຫັນວ່າຕາມຮ້ານຂາຍໄມ້ປະດັບທົ່ວໄປ ທັງໃນກຳແພງ ແລະ ແຂວງຕ່າງໆ ມັກຈະເຫັນເຕົ້າດອກເຈ້ຍວາງຂາຍເປັນຈຳນວນຫຼວງຫຼາຍ ເຊິ່ງເປັນທີ່ແນ່ນອນແລ້ວວ່າດອກເຈ້ຍໄດ້ກາຍເປັນທີ່ນິຍົມຂອງປວງຊົນອີກສະນິດນຶ່ງຍ້ອນຄວາມຕ້ອງການໃນທ້ອງຕະຫຼາດສູງ.

ດັ່ງນັ້ນການຂະຫຍາຍພັນດອກເຈັຍ ຈຶ່ງສຳຄັນ ແລະ ເປັນທີ່ນິຍົມ ທັງເປັນການສ້າງອາຊີບເສີມ ແລະສ້າງລາຍໄດ້ໃຫ້ແກ່ປະຊາຊົນຜູ້ທີ່ປະກອບອາຊີບນີ້.

ໃນວົງການໄມ້ດອກໄມ້ປະດັບ ເບິ່ງແລ້ວແມ່ນມີຄວາມກ້າວໜ້າຢ່າງສະໝ່ຳສະເໝີ ແລະໝັ້ນຄົງມາດົນສົມຄວນ ແຕ່ກໍ່ມີບາງຊ່ວງທີ່ໄມ້ປະດັບບາງຊະນິດໄດ້ຮັບຄວາມນິຍົມຫຼາຍຂຶ້ນເປັນພິເສດ ແລ້ວກໍ່ຄ່ອຍລຸດລົງຕາມລຳດັບ ແຕ່ໃນໄລຍະບໍ່ທໍ່ໃດປີມານີ້ດອກເຈັຍກັບໄດ້ຮັບຄວາມນິຍົມຫຼາຍ ແລະ ຫຼາຍຂຶ້ນເລື້ອຍໆ ເຖິງວ່າໄມ້ປະດັບຈຳພວກອື່ນຍັງໄດ້ຮັບຄວາມນິຍົມຢູ່ຄືເກົ່າກໍ່ຕາມ.

ດອກເຈັຍເປັນພັນໄມ້ປະດັບທີ່ຮູ້ຈັກດີ ແລະ ພົບເຫັນຢູ່ທົ່ວໄປ ເນື່ອງຈາກວ່າຕົ້ນດອກເຈັຍເປັນໄມ້ປະດັບທີ່ມີໃບປະດັບ ເຊິ່ງຜູ້ພົບເຫັນທົ່ວໄປມັກຄິດວ່າເປັນດອກທີ່ມີສີສັນສວຍງາມສວຍງາມ ເບິ່ງແລ້ວກໍ່ສະດຸດຕາແກ່ຜູ້ພົບເຫັນ ແລະ ເປັນໄມທີ່ປູກໄດ້ງ່າຍ ຈະເລີນເຕີບໂຕໃດດີ ທົນທານຕໍ່ສະພາບຄວາມແຫ້ງແລ້ງໄດ້ດີ. ຕົ້ນດອກເຈັຍເປັນໄມ້ຊະນິດເປັນເຄືອ ຖ້າມີສິ່ງໃຫ້ມັນເກາະຂຶ້ນມັນກໍ່ຈະເລືອຂຶ້ນໄປຕາມແບບຫຼືສິ່ງທີ່ຄ້ຳຊູມັນນັ້ນໄປເລື້ອຍໆ ນອກຈາກນີ້ຍັງສາມາດປູກໃນເຕົ້າແລ້ວຕັດແຕ່ງຊົງພຸ່ມຕາມຄວາມຕ້ອງການ ຂອງຜູ້ປູກໄດ້ ເຊິ່ງຈະໄດ້ຊົງພູ່ມກະທັດລັດ ແລະສວຍງາມ.

ຄົນເຮົາເລີ່ມຮູ້ຈັກດອກເຈັຍເປັນໄມ້ປະດັບມາເປັນເວລາດົນນານແລ້ວ ແລະດອກເຈັຍທີ່ມີລັກສະນະເຄິ່ງເຄືອ ເຄິ່ງພູ່ມ ພ້ອມທັງສາມາດຕັດແຕ່ງຊົງພູ່ມໄດ້ຕາມຄວາມຕ້ອງການ ຄົນເຮົາຈຶ່ງມັກຈະປູກຕົ້ນດອກເຈັຍເປັນເຕົ້າ ຫຼືໃຊ້ເຮັດປະຕູເຂົ້າເຮືອນ ໂດຍການສ້າງໃຫ້ເປັນໂຄງໄມ້ ຫຼື ໂຄງເຫຼັກຂຶ້ນ ເພື່ອຮັບນ້ຳໜັກຂອງຊົງພູ່ມໄວ້ເຊິ່ງໃນກໍລະນີນີ້ດອກເຈັຍສາມາດໃຫ້ທັງຄວາມສວຍງາມ ແລະ ໃຫ້ຮົ່ມເງົາອີກດ້ວຍ ເຊິ່ງໄລຍະເວລານີ້ຍັງນິຍົມປູກ ແລະ ຂະຫຍາຍພັນດອກເຈັຍເພື່ອ

ຄວາມສວຍງາມ ແລະ ຊ່ວຍສ້າງວຽກເຮັດໃຫ້ແກ່ຜູ້ມີຈຸດປະສົງຢາກເຮັດ ແລະ ສ້າງລາຍໄດ້ໃຫ້ແກ່ຜູ້ປະກອບອາຊີບນີ້ອີກດ້ວຍ.

1.1.ການລົງມາຝຶກຫັດໃນຄັ້ງນີ້ມີຈຸດປະສົງດັ່ງນີ້:

- ເພື່ອທົດລອງກ່ຽວກັບເຕັກນິກການຂະຫຍາຍພັນດອກເຈ້ຍ.
- ສຶກສາການໄລ່ລຽງເສດຖະກິດໃນການຜະລິດດອກເຈ້ຍ
- ເພື່ອເບິ່ງເປີເຊັນລອດຕາຍຂອງກາຍທົດລອງ

# ພາກທີ //

## ພາກທົບທວນເອກະສານ

### 2.1 ປະຫວັດ ແລະ ຖິ່ນກຳເນີດຂອງດອກເຈ້ຍ.

ຊື່ພື້ນເມືອງລາວ: ດອກເຈ້ຍ.

ຊື່ວິທະຍາສາດ: *Bougainvillea*

ຕະກຸນ: *Nyctaginaceac*

ດອກເຈ້ຍເປັນພືດທີ່ມີຖິ່ນກຳເນີດເດີມຢູ່ໃນເຂດຮ້ອນ ຫຼືໃກ້ໆກັບເຂດຮ້ອນຂອງໂລກເຊັ່ນ: ທາງຕອນໄຕ້ຂອງປະເທດຈີນ ແລະ ອາເມລິກາໄຕ້ເຊິ່ງນັກພືດສາສາດເວົ້າວ່າ: ເປັນດອກເຈ້ຍພັນພື້ນແທ້ໆ. ນັ້ນມີຢູ່ປະມານ 40 ພັນ ພາຍຫຼັງໄດ້ມີການແພ່ກະຈາຍພັນໄປຕາມທ້ອງຖິ່ນຕ່າງໆທົ່ວໂລກລວມທັງໄດ້ມີການປະສົມພັນໃຫ້ເກີດມີພັນໃໝ່ໆຂຶ້ນມາຢ່າງຫຼວງຫຼາຍ. ຈົນໃນປະຈຸບັນນີ້ໄດ້ມີດອກເຈ້ຍທີ່ມີສີສັນສວຍງາມເກີດຂຶ້ນຢ່າງຫຼວງຫຼາຍ. ( ປະຍູນ ພານິດສນອກ ສິງຫາ 2532).

2.2.. ລັກສະນະພັນຂອງດອກເຈັຍ.



( ຮູບ 1) ດອກເຈັຍພັນປະສົມ

2.2.1.ລັກສະນະທົ່ວໄປຂອງດອກເຈັຍພັນປະສົມ (ພັນປັບປຸງ)

ດອກເຈັ້ຍ *Bougain villea Hybrid.*

ຕະກຸນ: *Nyctaginaceac.*

ດອກເຈັຍພັນນີ້ຈັດເປັນດອກເຈັຍພັນທີ່ໃຫ້ດອກຫຼາຍ.ສີຂອງໃບປະດັບ(ຄົນສ່ວນຫຼາຍມັກຄິດວ່າດອກ). ມີສີສົ້ມອ່ອນຫຼືສີເຫຼືອງປົນແດງຊ້ອນກັນເຖິງ 3 ຊັ້ນຫຼືຫຼາຍກວ່ານັ້ນ. ຂະໜາດຂອງ

ໃບປະດັບມີຂະໜາດນ້ອຍເປັນຝອຍ ໃບປະດັບບໍ່ຕິດກັບກ້ານຄືພັນອື່ນໆເຊິ່ງຈະອອກສະເພາະແຕ່ບໍລິເວນສ່ວນຍອດສຸດຂອງລຳຕົ້ນເທົ່ານັ້ນ ເບິ່ງແລ້ວຈະສວຍງາມຕ່າງກັບພັນອື່ນໆ.ລຳຕົ້ນມີຂະໜານນ້ອຍ ແລະ ມີຫຼັກສະນະເປັນພຸ່ມສາມາດຕັດແຕ່ງໄດ້ງ່າຍ. (ໄມຕີ ປະທຸມວົງ).



(ຮູບ2 ) ດອກເຈ້ຍພັນພື້ນເມືອງ

2.2.2. ລັກສະນະທົ່ວໄປຂອງພັນພື້ນເມືອງ (ພັນດັ້ງເດີມ).

*Bougain villea).*

ຕະກຸນ: *Nyctaginaceac.*

ເປັນດອກເຈ້ຍພັນດັ້ງເດີມທີ່ເໝາະສຳລັບປູກເພື່ອຈຸດປະສົງທົ່ວໄປ ລຳຕົ້ນມີໜາມນ້ອຍ ສາມາດແຍກດອກໄດ້ ຕົ້ນທີ່ຍັງອ່ອນແມ່ນຈະເລີນເຕີບໂຕໄດ້ບໍ່ວ່າປູກໃນຮົ່ມຫຼືປູກກາງແຈ້ງ. ຊຶ່ງ

ພຸ່ມແຜ່ຂະຫຍາຍອອກກ້ວາງເຕັມທີ່ໂດຍບໍ່ມີຂອບເຂດຖ້າບໍ່ມີການຕັດແຕ່ງ, ໃບປະດັບເປັນຮູບໄຂ່ມີສີບົວສົດຫຼືສີອື່ນໆ. ໃຫ້ດອກສີແດງອົມຂຽວມີລັກສະນະຄືທີ່ສ່ວນປາຍບານອອກເປັນສີຂາວ. ເຊິ່ງເປັນພັນດັ້ງເດີມໃນເຂດຮ້ອນ ຈະເລີນເຕີບໂຕໄດ້ດີໃນພື້ນທີ່ແຫ້ງແລ້ງ ຂະໜາດຂອງຊົງພຸ່ມສູງໃຫ່ຍ ຊໍ່ດອກມີຂະໜາດໃຫ່ຍ ແລະ ໃບປະດັບກໍ່ມີຂະໜາດໃຫ່ຍເຊິ່ງມີສີສັນສວຍງາມ.(ໄມຕີ ປະທຸມວົງ).

## 2.3. ລັກສະນະທົ່ວໄປຂອງດອກເຈ້ຍ

ດອກເຈ້ຍເປັນພືດສະນິດໄມ້ເນື້ອແຂງ ແລະ ໜຽວເປືອກຂອງລຳຕົ້ນບາງມີກິ່ງກ້ານສາຂານ້ອຍຍາວແລ້ວກົ່ງລົງຫາພື້ນດິນ. ຂະໜາດຂອງຊົງພຸ່ມ ມີຂະໜາດແຕ່ນ້ອຍຫາໃຫ່ຍ ແລະ ສູງເຖິງ 30m. ເປັນພືດທີ່ມີອາຍຸຍືນຍາວຫຼາຍສິບປີ ເຊິ່ງມີລັກສະນະຕ່າງໆທີ່ສາມາດເຫັນໄດ້ສັດເຈນດັ່ງຕໍ່ໄປນີ້:

- ລຳຕົ້ນ *(Stem)*

ດອກເຈ້ຍເປັນໄມ້ປະເພດເນື້ອແຂງ ມີໜາມຂຶ້ນຕາມລຳຕົ້ນໂດຍຈະອອກຢູ່ເໜືອກ້ານຂອງໃບລັກສະນະຂອງລຳຕົ້ນຈັດເປັນໄມ້ຍືນຕົ້ນ ເປັນໄມ້ພຸ່ມໜາມຂອງດອກເຈ້ຍຈັດເປັນໜາມຍາວເຊິ່ງຈັດເປັນສ່ວນນຶ່ງຂອງລຳຕົ້ນທີ່ປ່ຽນແປງມາ ມີທໍ່ອາຫານ ແລະທໍ່ນ້ຳຕິດມາພ້ອມ ພາຍໃນລຳຕົ້ນຂອງດອກເຈ້ຍປະກອບດ້ວຍເນື້ອໄມ້(Wood). ແລະຢູ່ໃຈກາງຂອງລຳຕົ້ນມີໃຈໄມ້( *Pith* ).

ຢູ່ໃນຊັ້ນທັດມາຈະມີເຫຍື່ອຈະເລີນ (Cambium). ເປັນບາງໆຢູ່ອ້ອມເນື້ອໄມ້ທີ່ສ້າງຄວາມຈະເລີນເຕີບ ໂຕແລະ ສຸດທ້າຍເປັນຊັ້ນຂອງເປືອກ (Bark ). ຢູ່ທາງນອກສຸດເຊິ່ງມີສີນ້ຳຕານອ່ອນຈົນເຖິງສີຂ້ອນຂ້າງດຳ. ຖ້າເປັນກິ່ງອ່ອນເປືອກຂອງຕົ້ນດອກເຈ້ຍຈະມີຂະໜາດບາງຫຼາຍ ເຊິ່ງເຮົາຈະລອກເປືອກອອກຈາກລຳຕົ້ນຍາກທີ່ສຸດ( ປະຍຸນ ສິງຫາ 2532 )

- ໃບ (leaf)

ໃບຂອງຕົ້ນດອກເຈ້ຍເປັນໃບສະນິດໃຍດ່ຽວ ການແຕກຂອງໃບຈະແຕກອອກສະຫຼັບກັບກິ່ງຫຼືກິ່ງກັນຂ້າມກັນ ແລະ ແຜ່ນໃບຈະມີສີຂຽວ ບາງສະນິດອາດເປັນໃບລາຍຫຼືດ່າງ. ຮູບຮ່າງລັກສະນະຂອງໃບແມ່ນສະນິດໃບມົນແຕ່ປາຍໃບແຫຼມ ຂະໜາດຂອງໃບມີຄວາມຍາວປະມານ 3-5Cm ແລະກ້ວາງປະມານ 2,5-3Cm ເຊິ່ງມີໜ້າທີ່ປຸງແຕ່ງອາຫານເພື່ອໄປຫຼໍ່ລ້ຽງທຸກພາກສ່ວນຂອງລຳຕົ້ນ. (ປະຍູນ ສິງຫາ 2532)

* ໃບປະດັບ (bracts)

ໃບປະດັບຂອງດອກເຈ້ຍມີລັກສະນະຄ້າຍຄືຮູບຫົວໃຈຢູ່ລວມກັນເປັນຊໍ່ມີ 3-5ໃບແມ່ນຂຶ້ນກັບຊະນິດພັນ. ຖານຂອງໃບປະດັບເຮັດໜ້າທີ່ແທນກາບຮອງໃບທີ່ມີສີສັນສວຍງາມ ແລະ ມີ

ຫຼາຍສີ ເຊິ່ງຄົນທົ່ວໄປເຫັນແລ້ວຄິດວ່າເປັນດອກ ແຕ່ຄວາມຈິງແລ້ວແມ່ນໃບປະດັບ. ໃບປະດັບມີຄວາມຍາວປະມານ 2,5-3Cm. ແຕ່ລະສະນິດຈະມີຄວາມສວຍງາມສະເພາະໃຜມັນ ສາມາດດຶງດູດຈິດໃຈຂອງຜູ້ພົບເຫັນ ເຊິ່ງຈະມີສີຕ່າງໆມາກມາຍຫຼາຍສີເຊັ່ນວ່າ: ສີແດງ, ສີມ່ວງ, ສີສົ້ມ, ສີບົວ, ສີແສດ, ສີເຫຼືອງ, ສີຂາວ ແລະ ສີອື່ນໆ ແລະບາງສະນິດດອກດຽວກັນອາດມີເຖິງ 2 ຫຼື 3 ສີ ເບິ່ງແລ້ວຄືກັບວ່າມີການແຕ່ງແຕ້ມດ້ວຍສີສັນລວດລາຍຕ່າງໆ. (ປະຍູນ ສິງຫາ 2532)

- ດອກ (flower)

ດອກຂອງຕົ້ນດອກເຈ້ຍຈັດເຂົ້າໃນປະເພດຊໍ່ດອກແບບທໍ່ ດອກມີຂະໜາດນ້ອຍເບິ່ງແລ້ວບໍ່ງາມຕາປານໃດ ແຕ່ບາງຄັ້ງຈະຕັດກັບສີຂອງໃບປະດັບເຮັດໃຫ້ມີສີສັນສວຍງາມໄປອີກແບບຜູ້ຄົນທີ່ພົບເຫັນດອກຂອງຕົ້ນດອກເຈ້ຍສ່ວນຫຼາຍມັກຈະເຂົ້າໃຈວ່າດອກເປັນເກສອນຂອງດອກເຊິ່ງມີລັກສະນະເປັນຫຼອດຍາວປະມານ 1-2 cm ທັງປາຍຂອງດອກຈະບານອອກແລະມີສີຂາວ ໃນຊໍ່ດອກນຶ່ງໆຈະມີດອກຢູ່ 3 ດອກໃນນຶ່ງຊຸດໃບປະດັບ. ດອກທີ່ເຮົາເຫັນນີ້ຈັດເປັນດອກສົມບູນເພດຄືຈະມີທັງເກສອນຜູ້ ແລະ ເກສອນແມ່ຢູ່ໃນດອກດຽວກັນ ແລະ ອາດຈະຈັດເປັນດອກທີ່ບໍ່ສົມບູນເພດກໍ່ໄດ້ ເພາະວ່າບາງດອກຈະມີແຕ່ເກສອນຜູ້ ແລະ ບາງດອກຈະມີແຕ່ເກສອນແມ່ທີ່ຢູ່ໃນຊໍ່ດອກດຽວກັນ ແລະ ເວລາທີ່ຕົ້ນດອກເຈ້ຍອອກດອກເຕັມທີ່ໃບຂອງມັນຈະນ້ອຍກ່ວາປົກກະຕິ (ປະຍູນ ສິງຫາ 2532).

## 2.4. ຄວາມສຳຄັນ ແລະ ຄຸນປະໂຫຍດຂອງດອກໄມ້

### 2.4.1. ຄວາມສຳຄັນ.

ໄມ້ປະດັບຖືກນຳມາໃຊ້ເປັນປະໂຫຍດໃຊ້ໃນຊີວິດປະຈຳວັນຕັ້ງແຕ່ດົນນານມາແລ້ວ ຈົນກາຍເປັນພືດເສດຖະກິດທີ່ສຳຄັນຊະນິດນຶ່ງໃນປະຈຸບັນ ເຊິ່ງສາມາດສ້າງລາຍໄດ້ໃຫ້ກັບຄອບຄົວ ເຊິ່ງວ່າໄດ້ມີການຂາຍເປັນຈຳນວນຫຼວງຫຼາຍ ໂດຍຜູ້ໃຊ້ມັກນິຍົມນຳດອກໄມ້ໄປຕົບແຕ່ງບ້ານເຮືອນ, ອາຄານສະຖານທີ່ຕ່າງໆ ໃຊ້ຫ້ອຍເປັນພວງມາໄລ, ເຮັດເປັນເຕົ້າດອກໄມ້ ແລະ ໃຊ້ໃນພິທີຈັດງານບຸນຕ່າງໆ ເຊັ່ນວ່າ: ງານບຸນ, ງານບວດ, ງານຂຶ້ນເຮືອນໃໝ່, ງານແຕ່ງງານ, ງານສົບ,ໃຊ້ອວຍພອນວັນເກີດ, ອວຍພອນປີໃໝ່, ແລະໃຊ້ໃນງານເທດສະການຕ່າງໆ. ແມ່ນມັກຈະມີດອກໄມ້ເຂົ້າມາກ່ຽວຄ້ອງນຳສະເໝີ ນອກຈາກການນຳດອກໄມ້ມາໃຊ້ເປັນປະໂຫຍດໃນເລື່ອງຄວາມສວຍງາມແລ້ວ. ນອກຈາກນີ້ດອກໄມ້ຫຼາຍສະນິດຍັງຖືກນຳມາໃຊ້ອາຫານຫຼືຢາປົວພະຍາດ ໂດຍນຳມາປະກອບກັບສະໝູນໄພອື່ນໆ.

ນອກຈາກນີ້ແລ້ວ ສຸຂະພາບດ້ານຈິດໃຈຂອງທຸກແມ່ນຕ້ອງການພົບເຫັນໃນສິ່ງທີ່ສວຍງາມ ບໍ່ວ່າຈະເປັນສິ່ງທີ່ສວຍງາມຕາມທຳມະຊາດຫຼືຄົນສ້າງຂຶ້ນກໍ່ຕາມ. ຄວາມສວຍງາມຕາມທຳມະຊາດຂອງດອກໄມ້ ເມື່ອນຳມາປຸກຕົບແຕ່ງຕາມສະຖານທີ່ຕ່າງໆ ກໍ່ຈະເພີ່ມຄວາມສວຍງາມໃຫ້ແກ່ສະຖານທີ່ນັ້ນ. ເຊິ່ງພາໃຫ້ເກີດຄວາມສຸກໃຈພໍໃຈແລ້ວຈະງາມຕາແກ່ເຈົ້າຂອງ ແລະ ຜູ້ພົບເຫັນອີກດ້ວຍ. ດັ່ງນັ້ນຈະເຫັນໄດ້ວ່າດອກໄມ້ນັບມື້ຍິ່ງເພີ່ມທະວີຄວາມສຳຄັນຫຼາຍຂຶ້ນ. ການຜະລິດດອກ



ສູນຄົ້ນຄວ້າປ່າໄມ້
ຫ້ອງສະໝຸດ
ເລກທະບຽນ: 1085
ເລກໝູ່ໜັງສື:
ວັນທີ: 9.7.04

ໄມ້ເປັນອາຊີບຈຶ່ງເພີ່ມຂຶ້ນເລື້ອຍໆ, ປະກອບກັບສະພາບແວດລ້ອມໂດຍທົ່ວໄປຂອງປະເທດ ມີຄວາມເໝາະສົມໃນການປູກດອກໄມ້ເປັນຢ່າງດີ. ( ໄມຕີ ປະທຸມວົງ).

2.4.2. ຄຸນປະໂຫຍດ

ການປູກດອກໄມ້ສ່ວນໃຫ່ຍຈັດຢູ່ໃນລັກສະການຜະລິດແບບເປັນອາຊີບເພື່ອສ້າງລາຍໄດ້ແກ່ຜູ້ປູກ. ດອກໄມ້ທີ່ນິຍົມປູກໄດ້ແກ່: ກ້ວຍໄມ້, ກຸຫຼາບ, ດອກເຈັຍ, ເປັນຕົ້ນ.ດອກມະລິ, ດາວເຮືອງ,ດອກບົວແລະດອກອື່ນໆ.ເຊິ່ງເປັນການສ້າງລາຍໄດ້ເສີມໃຫ້ແກ່ຄອບຄົວຫຼືຜູ້ໄຊ້ປະກອບອາຊີບເສີມ ໂດຍທີ່ຕົນເອງມີອາຊີບເສີມຢ່າງອື່ນຢູ່ແລ້ວເຊັ່ນ: ເປັນຄູ,ພະນັກງານລັດ,ຫຼືປູກພືດສະນິດອື່ນແລ້ວປູກດອກໄມ້ປົນກັນໄປພ້ອມ. ເຊິ່ງລັກສະນະການປູກແມ່ນອາດຈະມີຫຼາຍລັກສະນະຄື: ການປູກເປັນພືດແຊມຫຼືປູກໃນບໍລິເວັນບ້ານ. ເຊິ່ງດອກໄມ້ເປັນອາຫານທາງຕາ ແລະ ຈິດໃຈຂອງຄົນ ເຮົາອີກດ້ວຍ.ເຊິ່ງຄວາມສວຍງາມຂອງດອກໄມ້ໃຫ້ປະໂຫຍດແກ່ຄົນໂດຍກົງ ແລະທາງອ້ອມ. ຜູ້ຄົນມັກນິຍົມນຳເອົາດອກໄມ້ໄປປະດັບປະດາຕາມອາຄານສະຖານທີ່ຕ່າງໆ. ແລະ ໄຊ້ເປັນຂອງຂວັນໃນວັນປີໃໝ່, ຂອງຂວັນສຳລັບຄົນເຈັບ, ສຳເລັບຄວາມຮັກ. ຢ່າງນີ້

ດັ່ງນັ້ນອາຊີບການປູກດອກໄມ້ນັບວ່າເປັນອາຊີບນຶ່ງທີ່ຫຼາຍຄົນໃຫ້ຄວາມສົນໃຈ ເພາະສາມາດສ້າງລາຍໄດ້ໃຫ້ກັບຜູ້ປູກເປັນຢ່າງດີ. ( ໄມຕີ ປະທຸມວົງ).

# ພາກທີ່ III

## ອຸປະກອນ ແລະວິທີການ

### 3.1 ອຸປະກອນຮັບໃຊ້

- ອຸປປະກອນຮັບໃຊ້ພາກຫ້ອງການ

- ແຟ້ມບັນທຶກ
- ປື້ມ, ສໍ, ບິກ, ບັນທັດ,
- ເຈັ່ຍລ່າມ.
- ຢາງລຶບ.
- ປື້ມເອກະສານ.
- ເພີດ.

- ອຸປະກອນພາກສະໜາມ.

1. ຕົ້ນຕໍ.
2. ມີດ.

3. ເທບ

4. ກິ່ງພັນດີ.

5. ເຊືອກຟາງ. ໄມ້ຕອກ.

6. ຖົງຢາງໃສຂະໜາດ 4x6 ນີ້ວ.

7. ເຈ້ຍ.




( ຮູບ 3 ) ອຸປະກອນ

1.. ຕົ້ນຕໍ.

ເປັນສ່ວນທີ່ຈະນຳມາໃຊ້ເຮັດເປັນຕົ້ນຕໍ ແລະຮາກຂອງກິ່ງພັນດີທີ່ເຮົາຕ້ອງການສ່ວນໃຫຍ່ ໃຊ້ຕໍກັບພື້ນເມືອງທີ່ມີຄວາມແຂງແຮງທົນທານຕໍ່ສະພາບໄດ້ດີເພາະມັນສາມາດຊອກຫາອາຫານ ໄດ້ດີ.ແຕ່ ຖ້າບໍ່ສາມາດໃຊ້ພັນພື້ນເມືອງເຮົາເອົາຕົ້ນຕໍ ພັນປັບປຸງ ເປັນຕົ້ນຕໍແທນກໍ່ ໄດ້ຄືກັນ

2. ມີດ.

ມີດທີ່ໃຊ້ຕ້ອງມີລັກຊະນະຄົມດີ ແລະ ສະອາດ ໂດຍທົ່ວໄປ ແລ້ວເຮົາມັກຈະນິຍົມໃຊ້ມີດ ຕັດກິ່ງໄມ້( CUTTER ) ເນື່ອງຈາກວ່າມນັມີຄວາມຄົມຫຼາຍທີ່ສຸດ ແລະສະດວກໃນການໃຊ້ ບໍ່ ຕ້ອງຝົນເລື້ອຍ ໆ ເພາະວ່າ: ເມື່ອໃຊ້ໄປດົນແລ້ວຄວາມຄົມລຸດລົງກໍ່ ຈະຫັກຖີ້ມຕາມຮອຍທີ່ຂີດ ໄວ້ທາງຂ້າງຂອງໃບມີດ ແລ້ວ ເລື່ອນສ່ວນທີ່ມີຄົມຂື້ນມາແທນ . ນອກຈາກນີ້ຍັງມີມີດທີ່ເຮົາເຮັດ ຂື້ນມາເພື່ອປາດເນື້ອໄມ້ໂດຍ ສະເພາະເຊິ່ງມີຂາຍຕາມຮ້ານຂາຍເຄື່ອງກະສິກອນທົ່ວໄປ.

3. ເທບ.

ໃຊ້ສຳລັບພັນໂທມໂດຍທີ່ນິຍົມໃຊ້ແບບເປັນສີເພື່ອສະດວກໃນການແບ່ງແຍກພັນຂອງໄມ້ ທີ່ອາດຈະມີການສັບສົນກັນຕາມພາຍຫຼັງ ໂດຍຈະໃຊ້ເທບສີດຽວກັນ ໃນການໂທມ ຕິດຕາ ໃນກິ່ງພັນດຽວກັນ ແລະ ມັກຊື້ມາເປັນກໍ້ຂະໜາດໃຫ່ຍ ແລ້ວຕັດເປັນສ່ວນ ຂະໜາດພໍດີ ເພື່ອນຳໃຊ້ງານ .

4. ກິ່ງພັນດີ.

ເປັນກິ່ງຂອງຕົ້ນພັນດີ ທີ່ເຮົາຈະໃຊ້ໃນການຂະຫຍາຍພັນຊຶ່ງເຮົາ ມີ ຫຼັກໃນການພິຈາລະນາ ກິ່ງພັນດີດັ່ງຕໍ່ໄປນີ້:

- ເປັນກິ່ງພິເສດ ຄື ເປັນກິ່ງທີ່ ບໍ່ອ່ອນ ບໍ່ແກ່ ເກີນໄປ ມີອາຍຸບໍ່ເກີນ 1 ປີ ມີໃບຍອດຈະເລີນເຕີບໂຕ ເປັນໃບແກ່ແລ້ວ ຂະໜາດຂອງງ່າອາດຈະເທົ່າກັນກັບໄມ້ຄີບຖູ່ ຫຼື ນ້ອຍກ່ວານັ້ນເລັກນ້ອຍ.

- ມີຂະໜາດຄວາມຍາວ ປະມານ 10 - 20 ຊມ. ຄວນເປັນກິ່ງດຽວ ກິ່ງທີ່ຈະນຳໄປທົດລອງຄວນເປັນສີຂຽວ ທີ່ ຍັງບໍ່ ແຕກຫຼາຍງ່າ ( ຖ້າແຕກຫຼາຍງ່າ ແລ້ວ ມັນມັກຈະແກ່ເກີນໄປ.

- ເປັນກິ່ງທີ່ມີການຈະເລີນເຕີບໂຕດີ ຄວນເປັນກິ່ງທີ່ ແຂງແຮງ ປັດຈະຈາກພະຍາດແລະບົ້ງ ແມງເຂົ້າທຳລາຍ

5. ເຊືອກຟາງ.

ໃຊ້ສຳລັບມັດປາກຖົງຢາງ ພາຍຫຼັງ ສຽບ ຍອດສຳເລັດ ແລ້ວ.

6. ຖົງຢາງ.

ຂະໜາດ 4x 6 ນີ້ວ ໃຊ້ເຂົ້າໃນການຂະຫຍາຍພັນໄມ້ປະດັບ ຖ້າເຮົາຂະຫຍາຍພັນດ້ວຍການປັກຊຳ ແມ່ນ ເອົາເປັນຖົງຮ່າຍເບົ້າ ໂດຍເຈາະໃຫ້ເປັນ 8 ຮູ ການທີ່ເຮົາໃຊ້ຖົງຢາງໃສຮ່າຍເບົ້ານີ້ ແມ່ນເພື່ອສະດວກໃນການຕິດຕາມເບິ່ງການແຕກ ແລະ ຂະຫຍາຍຮາກຂອງກິ່ງຊຳ ຖ້າເຮົາເອົາຖົງຢາງດຳມັນຈະບໍ່ເຫັນ ຍາກແກ່ການຕິດຕາມ. ຖ້າເຮົາຂະຫຍາຍພັນດ້ວຍການສຽບຍອດ ແມ່ນເຮົາໃຊ້ຖົງວມຍອດກິ່ງພັນໃຫ້ຫຸ້ມເຖິງຕົ້ນຕໍທີ່ສຽບໃໝ່. ຫຼັງຈາກນັ້ນເຮົາກໍ່ໃຊ້ເຊືອກຟາງມັດປາກຖົງ ເພື່ອປ້ອງກັນບໍ່ໃຫ້ນ້ຳເຂົ້າ ແລະ ຍັງຊວຍຮັກສາການລະເຫີຍອາຍຂອງນ້ຳໃນຍອດຂອງກິ່ງພັນ.

7. ເຈັຍ.

ແມ່ນເຮົາໄຊ້ເຂົ້າໃນການສຽບຍອດ. ຫຼັງຈາກທຳການສຽບຍອດສຳເລັດແລ້ວ ເຮົາຈະໄຊ້ເຈັຍພັບເປັນຈວຍໄຊ້ງວມຖົງຢາງ ເພື່ອປ້ອງກັນບໍ່ໃຫ້ຄວາມຮ້ອນຫຼືແສງແດດຖືກກິ່ງພັນຫຼາຍ. ເພາະຈະສົ່ງຜົນສະທ້ອນຕໍ່ກິ່ງພັນໄດ້.

## 3.2 ວິທີການ.

### 3.2.1 ສະຖານທີ່ການສຶກສາ

#### 3.2.1.1.ປະຫວັດຄວາມເປັນມາຂອງສູນຄົ້ນຄ້ວາປ່າໄມ້ນ້ຳຊ່ວງ.

ສູນຄົ້ນຄ້ວາວິທະຍາປ່າໄມ້ນ້ຳຊ່ວງໄດ້ສ້າງຕັ້ງຂຶ້ນໃນປີ 1981 ເຊິ່ງເປັນສູນນຶ່ງທີ່ຂຶ້ນກັບອົງການວິທະຍາປ່າໄມ້ຂອງກົມປ່າໄມ້. ກະຊວງກະສິກຳ ແລະ ປ່າໄມ້ ສູນດັ່ງກ່າວແມ່ນສູນທົດລອງພັນໄມ້ນາໆສະນິດ ທັງພາຍໃນ ແລະ ຕ່າງປະເທດ. ເພື່ອເກັບຂໍ້ມູນປະກອບເອກະສານ ແລະແຈກຢາຍໃຫ້ບັນດາແຂວງຕ່າງໆ ເພື່ອນຳໄຊ້ເຂົ້າໃນວຽກງານປູກປ່າ. ເຊິ່ງສູນດັ່ງກ່າວແຕ່ກ່ອນເອີ້ນວ່າສວນກ້າເບ້ຍໄມ້ນ້ຳຊ່ວງ ທີ່ສ້າງຕັ້ງຂຶ້ນໃນປີ 1981 ໂດຍຜ່ານຂະບວນວິວັດແຫ່ງການປັບປຸງ ແລະ ການພັດທະນາຕາມໄລຍະຂັ້ນຕອນດັ່ງນີ້ :

- ໄລຍະ 1981-1984 ເປັນສະຖານນີກ້າເບ້ຍໄມ້.

- ໄລຍະ 1985-1995 ເປັນສູນຄົ້ນຄ້ວາວິທະຍາປ່າໄມ້.

- ໄລຍະ 1996-2000 ເປັນສູນຄົ້ນຄ້ວາປ່າໄມ້.

ປະຈຸບັນສູນຄົ້ນຄ້ວາປ່າໄມ້ ເປັນ 1 ໃນຈຳນວນ 9 ສູນທີ່ຂຶ້ນກັບສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ເຊິ່ງສະຖານທີ່ດັ່ງກ່າວມີ:

-ຄວາມສູງຈາກໜ້ານ້ຳທະເລ 180 ແມັດ

-ອຸນະພູມສະເລ່ຍ 26,7 ອົງສາເຊ

-ອຸນະພູມສູງສຸດສະເລ່ຍ 29,3 ອົງສາເຊ.

-ອຸນະພູມຕ່ຳສຸດສະເລ່ຍ 22,4 ອົງສາເຊ.

-ປະລິມານນ້ຳຝົນສະເລ່ຍ 1.500 ມີນລີແມັດ / ປີ.

-ລັກສະນະຂອງດິນ ເປັນດິນປົນຊາຍ, ຄ່າສະເລ່ຍ pH=5,4

### 3.2.1.2. ທີ່ຕັ້ງ ແລະ ຂອບເຂດຊາຍແດນ.

ສູນຄົ້ນຄ່ວາປ່າໄມ້ນ້ຳຊ່ວງ ແມ່ນສູນນຶ່ງທີ່ທຳການຄົ້ນຄ້ວາທົດລອງຢູ່ງວກັບວຽກງານປ່າໄມ້ໂດຍກົງ. ເຊິ່ງມີສະຖານທີ່ຕັ້ງຢູ່ ເມືອງນາຊາຍທອງ ແຂວງກຳແພງ ແລະ ຫ່າງຈາກຕົວເມືອງ

ປະມານ 38 ກິໂລແມັດ ແລະ ອີກ 6 ກິໂລແມັດ ຕາມທາງແດງເລີກເຂົ້າໄປຫາອ່າງນໍ້າຊ່ວງ ເຊິ່ງມີຊາຍແດນຕິດກັບແຕ່ລະບ່ອນດັ່ງນີ້:

-ທິດເໜືອຕິດກັບ ບ້ານນາເທບ.

-ທິດໃຕ້ຕິດກັບ ສູນຄົ້ນຄ່ວາການລ້ຽງສັດ.

-ທິດຕາເວັນຕົກຕິດກັບ ອ່າງນໍ້າຊ່ວງ.

-ທິດຕາເວັນອອກຕິດກັບ ບ້ານໂພນທອງ (ບ້ານ 4 )ແລະບ້ານໂພສີ (ບ້ານ 5)

- 3.2.1.3.ໂຄງຮ່າງການຈັດຕັ້ງສູນຄົ້ນຄວ້າປ່າໄມ້



- ຄວາມສຳຄັນຂອງການຂະຫຍາຍພັນ

ການຂະຫຍາຍພັນສຳລັບຕົ້ນໄມ້ຊະນິດຕ່າງໆ. ບໍ່ວ່າຈະເປັນດອກໄມ້, ໄມ້ໃຫ້ໝາກ ແລະ ຕົ້ນໄມ້ປ່າຊະນິດຕ່າງໆ ທີ່ໄດ້ເຮັດມາເປັນເວລາດົນນານແລ້ວຄື: ການກ້າແກ່ນຫຼືການຂະຫຍາຍພັນແບບອາໄສເພດ ແຕ່ຕໍ່ມາໄດ້ຮັບຮູ້ວ່າຜົນຂອງການຂະຫຍາຍພັນດ້ວຍວິທີການກ້າແກ່ນນີ້ເຮັດໃຫ້ເກີດມີການປ່ຽນແປງທາງກຳມະພັນບາງຢ່າງເຊັ່ນ: ລັກສະນະຂອງໝາກໄມ້. ດອກໄມ້... ມີລັກສະນະແຕກຕ່າງຈາກແມ່ພັນ.

ດັ່ງນັ້ນວິທີການຂະຫຍາຍພັນໂດຍການນຳເອົາສ່ວນຕ່າງໆ ຈາກແມ່ພັນໂດຍກົງມາໃຊ້ທີ່ເອີ້ນກັນວ່າ: ການຂະຫຍາຍພັນແບບບໍ່ອາໄສເພດຈຶ່ງຖືກນຳມາໃຊ້ເພື່ອໃຫ້ໄດ້ຮັບຜົນດີກ່ວາເກົ່າເຊັ່ນ: ການປັກຊຳ. ການສຽບຍອດ. ການຕິດຕາ. ການໂຫນງ່າ. (ລວມທັງການຊຳລ້ຽງເນື້ອເຍື່ອທີ່ກຳລັງໄດ້ຮັບການສຶກສາ ແລະ ສົ່ງເສີມໃຫ້ນຳໄປໃຊ້ຢ່າງກ້ວາງຂວາງໂດຍສະເພາະໃນການຊຳດອກໄມ້ແຕ່ວ່າເຮົາຈະບໍ່ໄດ້ເວົ້າເຖິງໃນບົດລາຍງານສະບັບນີ້.) ໂດຍສາມາດຜະລິດເບ້ຍທີ່ຖ່າຍທອດທາງພັນຂອງແມ່ພັນຫຼືຕົ້ນດັ່ງເດີມມາທັງໝົດບໍ່ມີການປ່ຽນແປງພັນ. ດ້ວຍວິທີການນີ້ຈຶ່ງເປັນວິທີທີ່ດີທີ່ສຸດໃນການຜະລິດເບ້ຍໄມ້ຊັ້ນດີຈາກແມ່ພັນທີ່ໄດ້ຮັບການຄັດເລືອກມາເປັນຢ່າງດີ.

ການຂະຫຍາຍພັນໄມ້ປະດັບທີ່ຈະເວົ້າໃນບົດລາຍງານສະບັບນີ້ເປັນວິທີທີ່ນິຍົມປະຕິບັດກັນຢ່າງຫຼວງຫຼາຍຄື: ການປັກຊຳ (ການຊຳ ), ການສຽບຍອດ, ການຕິດຕາ (ຄູ່ມືສົ່ງເສີມການປູກປ່າ 10 ສິງຫາ 1998)

### 3.2. 2.1.ການຂະຫາຍພັນດອກເຈັຍດ້ວຍວິທີປັກຊຳ

.

ການຂະຫຍາຍພັນດອກເຈັຍດ້ວຍ ເປັນວິທີຂະຫຍາຍພັນແບບອະເພດ. ໂດຍນຳໃຊ້ສ່ວນຕ່າງໆ ຂອງລຳຕົ້ນ ເຊັ່ນ: ຕົ້ນຕໍຂະໜາດໃຫ່ຍ. ກິ່ງ ແລະລຳຕົ້ນທົ່ວໄປ ເຊິ່ງຄົນເຮົາມັກນິຍົມກັນປັກຊຳ ເພາະດອກເຈັຍເປັນພືດທີ່ອອກຮາກຄ່ອນຂ້າງງ່າຍ ການປັກຊຳສາມາດເຮັດໄດ້ງ່າຍ ແລະ ໄວ ໂດຍການນຳສ່ວນທີ່ຈະປັກຊຳ ມາຊຳລົງໃນເບົ້າທີ່ກຽມໄວ້ແລ້ວບົວລະບັດຮັກສາ ໃຫ້ນ້ຳເມື່ອແຕກຍອດໃໝ່ ແລະ ອອກຮາກແລ້ວຈິ່ງຍ້າຍໄປປູກ. ໂດຍມີຂັ້ນຕອນປະຕິບັດດັ່ງນີ້,

### 3.2.2.1. ການກຽມເຮືອນຮົ່ມ

ເຮືອນຮົ່ມເປັນສະຖານທີ່ໆໃຊ້ໃນການເກັບຮັກສາເບ້ຍໄມ້ນ້ອຍກ່ອນທີ່ຈະນຳໄປປູກ. ເປັນການປັບສະພາບແວດລ້ອມໃຫ້ເໝາະສົມຕໍ່ການຈະເລີນເຕີບໂຕຂອງເບ້ຍໄມ້ນ້ອຍ ເຊິ່ງເຮືອນຮົ່ມທີ່ໃຊ້ໃນການປັກຊຳທີ່ເໝາະສົມແມ່ນມີສິ່ງບັງແດດ 100% ເພື່ອບໍ່ໃຫ້ຄວາມຮ້ອນຈາກແສງແດດຖືກ. ເປັນເຮືອນຮົ່ມແບບຖາວອນ ແລະ ມີອາຍຸການໃຊ້ງານໄດ້ຫຼາຍປີ.

3.2.2.3. ການກຽມດິນສຳລັບຮ່າຍເບົ້າ

ວັດຖຸທີ່ໃຊ້ໃນການປັກຊຳນັບວ່າເປັນປັດໃຈສຳຄັນ ໃນການແຕກຮາກຂອງກິ່ງຊຳ. ວັດຖຸທີ່ນິຍົມໃຊ້ແມ່ນ:

ດິນປຸກຝັງ 50%

ຊາຍ 50%

ໂດຍອັດຕາ 1:1 ແລ້ວໃຊ້ຊ້ວນປະສົມໃຫ້ເຂົ້າກັນ.



( ຮູບ 4) ອັດຕາຂອງດິນ,ຊາຍ

.3.2.2.4..ການຮ່າຍເບົ້າ

ແມ່ນໄຊ້ຖົງຢາງໃສຂະໜາດ 4X6 ນີ້ວ ໂດຍໄຊ້ເຫຼັກເຈາະໃຫ້ເປັນຮູຈຳນວນ 8 ຮູແລ້ວ ນຳເອົາດິນທີ່ປະສົມແລ້ວມາຮ່າຍໃສ່ ຫຼັງຈາກນັ້ນນຳໄປລຽ່ງໄວ້ໃນເຮືອນຮົ່ມທີ່ກຽມໄວ້.



(ຮູບ 5 ) ການຮ່າຍເບົ້າ

3.2.2.5. ການກຽມກິ່ງພັນສຳລັບປັກຊຳ.

ເຮົາຄວນເລືອກເອົາຈາກຕົ້ນພັນດີ ທີ່ສົມບູນແຂງແຮງ, ທົນທານຕໍ່ໂລກແລະແມງໄມ້ໄດ້ດີ ສາມາດທົນທານຕໍ່ສະພາບຄວາມແຫ້ງແລ້ງແລະປັບປຸງໃຫ້ເຂົ້າສະພາບແວດລ້ອມໄດ້ດີ ຕາມປົກກະຕິແລ້ວ ກິ່ງພັນຈະຍາວປະມານ 15 - 20 cm ໂດຍມີຕາຢູ່ 3 - 5ຕາ ຄວນຕັດໃຫ້ເປັນມູມຫງ່ຽງ 45 ອົງສາ ແລະ ທັງກົກຄວນຕັດເຄິ່ງຂໍ້(ຕາ)ຫລືຕ່ຳກວ່າຕາເລັກນ້ອຍ ທາງປາຍຕັດສູງກວ່າຂໍ້ 1- 2 cm ຊວງເວລາໃນການຕັດ ແລະ ຊຳກິ່ງ ຄວນຈະເປັນຕອນເຊົ້າຫລືແລງ ກິ່ງທີ່ຕັດຄວນໃຫ້ປຽກຊຸ່ມຢູ່ຕະຫລອດ ຄວນເອົາແຊ່ໃສ່ຖຸຫລືຊາມ ເພື່ອປ້ອງກັນບໍ່ໃຫ້ກິ່ງຊຳແຫ້ງ



(ຮູບ 6 ) ກິ່ງຊຳ

3.2.2.6. ວິທີການປັກຊໍາ.

ສໍາລັບການປັກຊໍາຫຼັງຈາກກຽມອຸປະກອນແລ້ວກໍ່ນໍາເອົາກິ່ງພັນດອກເຈັຍທີ່ກຽມໄວ້ໄປຈຸ່ມລົງຮໍໂມນເລັ່ງຮາກຊະນິດເຊລາດິກເບີ 2 (SERADIX)ແລ້ວນໍາມາປັກຊໍາໃສ່ເບົ້າທີ່ກຽມໄວ້ໂດຍໃຊ້ໄມ້ຫຼັກເຈາະລົງໄປໃນດິນກ່ອນແລ້ວຈຶ່ງນໍາກິ່ງພັນລົງໄປໃຊ້ມືກວດດິນໃຫ້ແໜ້ນຈາກນັ້ນທົດນໍ້າໃຫ້ຊຸ່ມໂດຍທົດສອງເທື່ອຕໍ່ມື້ຄືທົດຕອນເຊົ້າ ແລະ ແລງ. ຫຼັງຈາກປັກຊໍາໄດ້ປະມານ 15-20 ວັນກິ່ງຊໍາຈະແຕກຍອດໃໝ່ ແລະ ປະມານ 3-4 ອາທິດ ຈະແຕກຮາກໃໝ່ອອກມາ. ຮາກທີ່ແຕກອອກນັ້ນຈະເກີດຕາມບໍລິເວນຂໍ້ຫຼືຕາ ທີ່ເຮົາຕັດພໍດີນັ້ນ.



( ຮູບ 7 ) ການປັກຊໍາ

### 3.2.2.7.ການບົວລະບັດຮັກສາ.

ຫຼັງຈາກປັກຊຳສຳ ແລ້ວ ຄວນໃຫ້ນ້ຳວັນລະ 2 ຄັ້ງ ຄື ເຊົ້າ ແລະແລງ ແລະ ຄວນທົດໃຫ້ ປຽກຊຸ່ມທັງ ເບົ້າ ແລະ ກິ່ງຊຳສະເໝີ ແຕ່ບໍ່ຄວນໃຫ້ປຽກຫຼາຍໃນໄລຍະກິ່ງຊຳເລີ່ມແຕກຍອດ, ຮາກໃໝ່ ຄວນລຸດການໃຫ້ນ້ຳລົງເຫຼືອພຽງ 1 ຄັ້ງຕໍ່ວັນ.

ສຳລັບລະດູທີ່ເໝາະສົມໃນການປັກຊຳ ແມ່ນລະດູຝົນ ຈະໄດ້ຮັບຜົນດີເພາະຄວາມຊຸ່ມໃນ ອາກາດສູງ ແລະພືດກໍ່ມີການຈະເລີນເຕີບໄດ້ດີ ເຊັ່ນ: ເດືອນພຶດສະພາ - ເດືອນສິງຫາ(5 - 8) , ໃນ ຕົ ປະທຸມວົງ



( ຮູບ 8 ) ການທົດນ້ຳ

### 3.2.2.8. ການຂະຫຍາຍພັນດອກເຈ້ຍ ດ້ວຍການສຽບຍອດ

ດອກເຈ້ຍເປັນໄມ້ປະດັບທີ່ຜູ້ປູກ ສາມາດປັບປຸງປ່ຽນແປງ ໃຫ້ມີຫຼາຍສີໃນຕົ້ນດຽວກັນ ເຊັ່ນ: ສີແດງ, ສີສົ້ມ, ສີຂາວ, ສີເຫຼືອງ, ສີບົວ ແລະສີຕ່າງໆ ໂດຍການຂະຫຍາຍພັນດ້ວຍວິທີການສຽບຍອດ ເຊິ່ງຜູ້ປູກດອກເຈ້ຍ ມັກນິຍົມເຮັດ ແລະມີເປີເຊັນການຕິດສູງສົມຄວນ. ການສຽບຍອດດອກເຈ້ຍ ນີ້ ບໍ່ແມ່ນວິທີການຂະຫຍາຍພັນໂດຍກົງ ແຕ່ເປັນວິທີການ ເຮັດໃຫ້ດອກເຈ້ຍ ມີຄວາມສວຍງາມໃນຕົ້ນດຽວກັນສາມາດເຮັດໄດ້ຫຼາຍສີ ຕາມຄວາມຕ້ອງການ ແລະ ຕ້ອງເປັນຜູ້ທີ່ມີປະສົບການສູງ ມີຄວາມສໍານິສໍານານ ແລະ ຕ້ອງເປັນຜູ້ທີ່ລະອຽດອ່ອນພໍສົມຄວນ ການຂະຫຍາຍພັນດ້ວຍວິທີນີ້ ແມ່ນເປັນການເຮັດໃຫ້ຕົ້ນ ດອກເຈ້ຍ ມີຫຼາຍສີໃນຕົ້ນດຽວກັນ.

ສາຍເຫດທີ່ໃຊ້ການຂະຫຍາຍພັນດອກເຈ້ຍ ດ້ວຍວິທີ ສຽບ ຍອດນີ້ ເພາະວ່າ: ດອກເຈ້ຍເປັນພືດທີ່ມີເປືອກຂອງລໍາຕົ້ນບາງ ແລະ ເປັນວິທີ ຂະຫຍາຍພັນຈາກຍອດອ່ອນ. ການສຽບຍອດຈຶ່ງເປັນວິທີ ທີ່ນິຍົມທີ່ສຸດ ການສຽບຍອດດອກເຈ້ຍທີ່ນິຍົມ ແລະ ໄດ້ຮັບດີ ແມ່ນການສຽບຍອດແບບຮູບ 4 ລ່ຽມເຊິ່ງມີຂັ້ນຕອນ ແລະ ວິທີປະຕິບັດດັ່ງນີ້:

### 3.2.2.9. ການກຽມຕົ້ນຕໍ ແລະກິ່ງພັນດອກເຈ້ຍ

ໃນການທີ່ຈະສຽບຍອດຂອງດອກເຈ້ຍ. ຕົ້ນຕໍທີ່ໃຊ້ໃນການສຽບຍອດ ບໍ່ວ່າຈະປູກໃນສະພາບໃດກໍ່ຕາມຕົ້ນຕໍຕ້ອງສົມບູນເຕັມທີ່ ສາມາດແຕກຕາ ແລະ ອອກຍອດໃໝ່ໄດ້ ສໍາລັບດອກເຈ້ຍທີ່ນໍາຕົ້ນຕໍຂະໜາດໃຫຍ່ມາປັກຊໍາຕ້ອງໃຊ້ເວລາປະມານ 3 ເດືອນຕົ້ນຕໍຈຶ່ງຈະແຕກຍອດໃໝ່

ເມື່ອຍອດມີຂະໜາດເທົ່າກັບໄມ້ຄີບຖູ່ຫຼືນ້ອຍກວ່າເລັກນ້ອຍຈຶ່ງໃຊ້ເປັນຕົ້ນຕໍໄດ້ສໍາລັບການສຽບຍອດ ໂດຍຕັດຍອດອອກໃຫ້ເຫຼືອຄວາມຍາວຂອງຍອດທີ່ແຕກໃໝ່ 15-20cm. ແລະ ບໍລິເວັນທີ່ຕັດຕ້ອງຢູ່ເໜືອຕາເລັກນ້ອຍ.

3.2.2.10. ຂັ້ນຕອນປະຕິບັດ.

-ໃຊ້ມີດຕັດເຕີຫຼືມີດແຖທໍາມະດາຜ່າຕົ້ນຕໍໃຫ້ເປັນຮູບຫຼີ້ມ ໂດຍຜ່າໃຫ້ເຄິ່ງກັບຕາຂອງຕົ້ນຕໍພໍດີ ແລະ ໃຫ້ເລິກປະມານ 1-2cm.

-ນໍາຍອດພັນດີມາສຽບໃສ່ຕົ້ນຕໍບ່ອນຮອຍຜ່າຂອງຕົ້ນຕໍດ້ານໃດນຶ່ງໃຫ້ພໍດີຫຼືຕິດທັງສອງຂ້າງຍິ່ງດີ (ເບິ່ງຮູບ 9)

-ໃຊ້ເທບຄຽນຮອຍປາກບາດ ໂດຍຄຽນແຕ່ລຸ່ມຂຶ້ນເທິງໃຫ້ແໜ້ນພໍສົມຄວນເພື່ອປ້ອງກັນບໍ່ໃຫ້ນໍ້າຫຼືເຊື້ອພະຍາດແຊກຊຶມເຂົ້າໄດ້.(ເບິ່ງຮູບ 10)



( ຮູບ9 ) ປາກບາດຂອງການສຽດຍອດ



( ຮູບ10 )ການຄຽນປາກບາດ.

-ຫຼັງຈາກໃຊ້ເທບຄຽນແລ້ວ ເຮົາກໍ່ນຳເອົາຢາງຂະໜາດ 4x6 ນີ້ວ. ງວມກິ່ງພັນທີ່ຕໍ່ໃໝ່ ໃຫ້

ກວມຮອດຍອດຂອງຕົ້ນຕໍທີ່ສຽບຍອດໃສ່ ເພື່ອປ້ອງກັນການລະເຫີຍອາຍຂອງນ້ຳຈາກຍອດພັນທີ່ສຽບໃໝ່.

-ເອົາຖົງຢາງໃຫ່ສຳເລັດ ເຮົາກໍ່ເອົາເຈ້ຍເຮັດເປັນຈວຍມາງວມໃສ່ເທິງຖົງຢາງເປັນຊັ້ນສຸດທ້າຍ ເພື່ອປ້ອງກັນຄວາມຮ້ອນຈາກແສງແດດ.



(ຮູບ11) ການເອົາຖົງຢາງໃສ່ເພື່ອກັນການລະເຫີຍອາຍ



ຮູບ12) ການເອົາເຈ້ຍໃສ່ກັນແສງແດດ

ສຳລັບທຸກຂັ້ນຕອນໃນການສຽບຍອດຂອງດອກເຈ້ຍ ຕ້ອງເຮັດດ້ວຍຄວາມລະອຽດອ່ອນ ຖ້າປະຕິບັດແຮງຫຼືບໍ່ລະມັດລະວັງຈະເຮັດໃຫ້ຍອດທີ່ສຽບໃໝ່ຊ້ຳ, ເຮົາຕ້ອງເຮັດລະມັດລະວັງ ເພາະຍອດທີ່ສຽບໃໝ່ເປັນຍອດອ່ອນ.

ຫຼັງຈາກສຽບຍອດໄດ້ປະມານ 7-10 ວັນ ໃຫ້ເອົາຈອຍເຈ້ຍອອກເບິ່ງວ່າຍອດທີ່ສຽບໃໝ່ຍັງຂຽວສົດຄືເກົ່າຫຼືບໍ່ ຖ້າຍອດແຫ່ວຫຼືຊ້ຳ ສະແດງວ່າການສຽບຍອດທີ່ເຮັດມາບໍ່ໄດ້ຮັບຜົນ. ແຕ່ຖ້າຍອດທີ່ສຽບໃໝ່ຍັງຂຽວສົດຢູ່ໃຫ້ເອົາເຈ້ຍອອກແລ້ວຕິດຕາມເບິ່ງເລື້ອຍໆ. ວ່າຕາເລີ່ມແຕກອອກຍອດພັນດີຫຼື ບໍ່ ຖ້າຕາເລີ່ມແຕກອອກໃຫ້ເອົາຖົງຢາງພ້ອມທັງເອົາມີດຕັດເທບທີ່ຄຽນອອກ. ແລ້ວຍອດທີ່ແຕກໃໝ່ຈະໆເລີນເຕີບໂຕຂື້ນເຊິ່ງສາມາດສຽບໄດ້ຫຼາຍສີຫຼາຍພັນໃນຕົ້ນດຽວກັນ. (ປະຍູນ ສິງຫາ 2532).

### 3.2.2.11 .ການຂະຫຍາຍພັນດອກເຈັຍດ້ວຍການວິທີການຕິດຕາແບບຮູບ4ລ່ຽມ

.

ດອກເຈັຍເປັນໄມ້ປະດັບທີ່ສາມາດຂະຫຍາຍພັນໄດ້ງ່າຍກວ່າໄມ້ປະດັບສະນິດອື່ນໆ ແລະ ສາມາດຂະຫຍາຍພັນໄດ້ດ້ວຍຫຼາຍວິທີ ການຕິດາກໍ່ເປັນວິທີນຶ່ງທີ່ຜູ້ປູກມັກນິຍົມເຮັດ. ແຕ່ ການຕິດຕາດອກເຈັຍນີ້ອາດຈະບໍ່ໄດ້ຈັດເຂົ້າໃນການຂະຫຍາຍພັນດອກເຈັຍໂດຍກົງ, ເຊິ່ງຕ້ອງການໃຫ້ມີຫຼາຍສີໃນຕົ້ນດຽວກັນຄືກັບການສຽບຍອດ ເຊິ່ງມີຂັ້ນຕອນດັ່ງນີ້:

### 3.2.2.12. ການກະກຽມຕົ້ນຕໍ ແລະ ກິ່ງພັນ (ແຜ່ນໜໍ່ຕາ)

ຕົ້ນຕໍ ແລະ ກິ່ງພັນທີ່ໃຊ້ໃນການຕິດຕາດອກເຈັຍ ຈະປູກໃນເຕົ້າ, ຕາມພື້ນດິນກໍ່ຕາມ ຕົ້ນຕໍ ແລະ ກິ່ງພັນຈະຕ້ອງສົມບູນ ສາມາດແຕກຕາພ້ອມທີ່ຈະເກີດເປັນຍອດໃໝ່ໄດ້. ລິໃບອອກໃສ່ຝຸ່ນ, ຫົດນ້ຳເລື້ອຍໆ ເພື່ອໃຫ້ມີນ້ຳພຽງພໍສຳລັບລໍ່ລ້ຽງລຳຕົ້ນ ເພື່ອສ້າງເງື່ອນໄຂໃນການປາດ ແລະ ຫຼອກເປືອກໄດ້ງ່າຍ. ເພາະວ່າຕົ້ນດອກເຈັຍມີເປືອກບາງ ຕ້ອງໄດ້ໃຊ້ຄວາມລະມັດລະວັງໃນການປະຕິບັດ. ຂະໜາດ ບ່ອນຕິດຕາມີໜ້າຕ້າງ 1-2cm.



(ຮູບ13) ປາກບາດຂອງຕົ້ນຕໍແລະແຜ່ນຕາ

### 3.2.2.13. ຂັ້ນຕອນ ແລະ ວິທີການປະຕິບັດ

ໃຊ້ມີດຂີດເປືອກຕົ້ນຕໍທີ່ກຽມໄວ້ ສັບ ແລະ ແກະເປືອກຕົ້ນຕໍໃຫ້ເປັນຮູບ 4 ລ່ຽມ. ໂດຍໃຫ້ປາກບາດຍາວປະມານ 1-2 cm. ຫຼັງຈາກນັ້ນນໍາກິ່ງພໍ່ຕາມາປາດເອົາພໍ່ຕາແຕ່ລຸ່ມຂື້ນເທິງແລ້ວຕັດໃຫ້ເປັນຮູບ 4 ລ່ຽມ ທີ່ມີຄວາມຍາວ ແລະ ຂະໜາດເທົ່າກັນກັບຕົ້ນຕໍ ນໍາເອົາເປືອກພໍ່ຕາມາແປະໃສ່ປາກບາດຂອງຕົ້ນຕໍ. ແປງໃຫ້ຮອຍປາກບາດສະເໝີ ແລະ ເຂົ້າກັນດີ ຈາກນັ້ນໃຊ້ເທບຄຽນແຕ່ລຸ່ມຂື້ນເທິງ, ໂດຍປິດພໍ່ຕາເອົາໄວ້ປະມານ 1-2 ອາທິດ ແລ້ວແກະເທບທີ່ຄຽນນັ້ນອອກເບິ່ງ. ຖ້າເຫັນວ່າແຜ່ນພໍ່ຕານັ້ນບໍ່ແຫ່ວກໍ່ຄຽນໄວ້ອີກ ໂດຍເວັ້ນພໍ່ຕາເອົາໄວ້ປະມານ 1-2 ອາທິດ ກໍ່ຕັດຍອດຕົ້ນຕໍອອກເພື່ອໃຫ້ພໍ່ຕາແຕກຍອດໃໝ່.



(ຮູບ14) ການຄຸງມເທບໃສ່ປາກບາດ

### 3.2.3. ການເກັບຂໍ້ມູນ

ແມ່ນໄດ້ເກັບກໍາຢູ່ສອງພາກສວນຄື:ພາກທິດສະດີແມ່ນໄດ້ສຶກສາບໍາເອກະສານຕ່າງທີ່ກ່ຽວຂ້ອງ ແລະ ພາກສ່ວນປະຕິບັດຕົວຈິງແມ່ນໄດ້ເຮັດຫຼາຍວິທີເຊັ່ນວ່າການປັກຊໍາ, ການສຽບຍອດ, ການຕິດຕາ ເອົາຂໍ້ມູນແຕ່ລະວິທີມາລວບລວມເປັນຂໍ້ມູນຢູ່ພາກສະໜາມຊຶ່ງເຮົາຈະຮູ້ເຖິງເປີເຊັນລອດຕາຍຂອງກິ່ງປັກຊໍາ

3.2.1. ເປີເຊັນລອດຕາຍ

ແມ່ນໄດ້ຈາກການນັບເອົາຈຳນວນກິ່ງທີ່ຕິດ(ລອດຕາຍ) ແລ້ວເອົາມາແທນໃສ່ສູດດັ່ງລຸ່ມນີ້:

$$\text{ເປີເຊັນລອດຕາຍ} = \frac{\text{ກິ່ງທີ່ລອດຕາຍ} \times 100}{\text{ຈຳນວນກິ່ງໄມ້ທັງໝົດ}}$$

3.2.4. ການວິເຄາະຂໍ້ມູນ

ແມ່ນການປຽບທຽບລະຫວ່າງຜົນໄດ້ຮັບຂອງການທົດລອງ ຜ່ານການລົງຝຶກປະຕິບັດຕົວຈິງນີ້ເຫັນໄດ້ວ່າ: ການສຽດຍອດ, ການປັກຊຳ ແມ່ນເປັນວິທີທີ່ໄດ້ຮັບຜົນດີກ່ວາໝູ່ໃນຈຳນວນທີ່ໄດ້ທົດລອງ.

พาภทิ/V.

# ຜົນໄດ້ຮັບ ແລະ ການສົນທະນາ

## 4.1 ຜົນໄດ້ຮັບ.

ຜ່ານການປະຕິບັດຕົວຈິງມາແລ້ວເຫັນວ່າການສຽບຍອດມີເປີເຊັນລອດຕາຍ 83,33%. ການປັກຊະມີເປີເຊັນລອດຕາຍ 80%. ການຕິດຕາມີເປີເຊັນລອດຕາຍ 50%.ເຊິ່ງສະແດງອອກໃນຕາຕະລາງທີ 1

### 4.1.1 ຜົນໄດ້ຮັບຈາກການທົດລອງຂະຫຍາຍພັນດອກເຈັຍດ້ວຍ 3 ວິທີຄື

:

ການປັກຊຳ.

ການສຽບຍອດ.

ການຕິດຕາ.

ການລົງເຮັດວຽກຕົວຈິງໃນໄລຍະ 2 ເດືອນ. ເຊິ່ງເລີ່ມແຕ່ວັນທີ 20/ 3/ 03 - 23/ 5/ 03.ຜົນທີ່ໄດ້ຮັບຈາກການທົດລອງມີລາຍລະອຽດດັ່ງລຸ່ມນີ້:

ຕາຕະລາງທີ1 ຜົນໄດ້ຮັບ

| ລ/ດ | ວິທີຂະຫຍາຍພັນ | ຈ/ນກິ່ງທົດລອງ (ກິ່ງ) | ຜົນໄດ້ຮັບ (ກິ່ງ) | ມີຊີວິດ (%) | ໝາຍເຫດ |
|---|---|---|---|---|---|
| 1 | ປັກຊໍາ | 50 | 27 | 54 | |
| 2 | ສຽບຍອດ | 30 | 17 | 57 | |
| 3 | ຕິດຕາ | 10 | 5 | 50 | |

4.1.2 ການໄລ່ລຽງເສດຖະກິດ

ຜ່ານການລວບລວມແຕ່ລະຂັ້ນຕອນຂອງການທົດລອງມານີ້ແມ່ນເຮົາສາມາດຄິດໄລຕົ້ນທຶນຂອງການຂະຫຍາຍພັນແມ່ນ 400100. ກີບ (ເບິ່ງຕາຕະລາງທີ2 ) ແລະ ມີເປີເຊັນພັງຕຶງ 10%

ຜົນໄດ້ຮັບຈາກການຂາຍຕົ້ນໄມ້ແມ່ນ 720000ກີບ (ເບິ່ງຕາຕະລາງທີ 3)ໃນການຂະຫຍາຍພັນດອກເຈ້ຍ 90ກິ່ງຕ້ອງໃຊ້ຕົ້ນທຶນຢູ່ 4001000ກີບ ມີລາຍຮັບຢູ່720000ກີບເມື່ອເອົາມາໄລ່ລຽງ ແລະ ລົບກັບຕົ້ນທຶນອອກແລ້ວແມ່ນໄດ້ກໍາໄລຢູ່ 319.900ກີບ

ຕາຕະລາງທີ 2  ລາຍຈ່າຍ

| ລດ | ລາຍການ | ຈຳນວນ | ຫົວໜ່ວຍ | ລາຄາ( ກີບ) | ລວມ (ກີບ) | ໝາຍເຫດ |
|---|---|---|---|---|---|---|
| 1 | ມີດ (cutter ) | 1 | ອັນ | 10.000 | 10.000 | |
| 2 | ເທບ | 1 | ອັນ | 5.000 | 5.000 | |
| 3 | ເຊືອກຟາງ | 1 | ອັນ | 3.000 | 3.000 | |
| 4 | ຖົງຢາງ 4x6ນີ້ວ | 1 | Kg | 15.000 | 15.000 | |
| 5 | ມີດຕັດກິ່ງໄມ້ | 1 | ອັນ | 45.000 | 45.000 | |
| 6 | ສານເລັ່ງຮາກ | 1 | ກ່ອງ | 20.000 | 20.000 | |
| 7 | ບົວ | 1 | ອັນ | 10.000 | 10.000 | |
| 8 | ຄຸ | 1 | ອັນ | 8.000 | 8.000 | |
| 9 | ເຕົ້າດອກໄມ້. | 30 | ອັນ | 7.000 | 210.000 | |
| 10 | ດິນ | 1 | $m^3$ | 25.000 | 25.000 | |
| 11 | ຊາຍ | 1 | $m^3$ | 40.000 | 40.000 | |
| | | | | | | |
| | ລວມ | | | | 391.000 | |

- ຄ່າເໜັງຕີງ. 10%

391000 ⟶ 100%

X ⟵ 10%

$$X = \frac{391000 \times 10\%}{100\%} = 39100 \text{ ກີບ}$$

391000 + 39100= 430100 ກີບ

- ຄ່າໃຊ້ຈ່າຍທັງໝົດ : 430100 ກີບ.

## ຕາຕະລາງທີ 3 ລາຍຮັບ

| ລ/ດ | ລາຍການ | ຈຳນວນກົ່ງ | ກົ່ງທີ່ໄດ້ | ລາຄາ(ກີບ) | ລວມ(ກີບ) | ໝາຍເຫດ |
|---|---|---|---|---|---|---|
| 1 | ການປັກຊຳ | 50 | 40 | 3.000 | .021000 | |
| 2 | ການລຽບຍອດ | 30 | 25 | 20.000 | 500.000 | |
| 3 | ການຕິດຕາ | 10 | 5 | 20.000 | 100.000 | |
| | | | | | 720.000 | |

ກຳໄລ = ລາຍໄດ້ - ຕົ້ນທຶນ

720000 -430100 = 289900ກີບ*

ຕົ້ນທຶນ = 430100 ກີບ

ຜົນໄດ້ຮັບ = 720000 ກີບ

ກຳໄລ = 289900 ກີບ

## 4.2 . ການສົນທະນາ

ຜ່ານການທົດລອງໃນໄລຍະ 2 ເດືອນມານີ້ຂ້າພະເຈົ້າມີຂໍ້ຄິດເຫັນດັ່ງນີ້:

- ການປັກຊຳແມ່ນວິທີທີ່ງ່າຍ ເຮັດໄດ້ໄວ ແຕ່ເປີເຊັນການແຕກຍອດ ແລະ ຮາກມີສູງ.ລົມຄວນເປີເຊັນລອດຕາຍເຖິງ 80%

- ການສຽບຍອດແມ່ນເປັນວິທີທີ່ຍາກລົມຄວນຕ້ອງຄວາມລະອຽດອ່ອນ ແລະ ລະມັດລະວັງ ແຕ່ເຫັນວ່າເປັນວິທີທີ່ໄດ້ຮັບຜົນສູງກວ່າໝູ່ໃນ 3 ວິທີຂອງການທົດລອງ ມີເປີເຊັນລອດຕາຍຢູ່83.33%

- ການຕິດຕາແມ່ນຍາກຫຼາຍ ເພາະເປັນໄມ້ຊະນິດໄມ້ທີ່ເປືອກບາງ ແລະ ລອກເປືອກຍາກສະນັ້ນຜົນໄດ້ຮັບຈຶ່ງຕ່ຳມີເປີເຊັນລອດຕາຍພຽງແຕ່ 50%

ດັ່ງນັ້ນຈຶ່ງສະຫຼຸບໄດ້ວ່າ: ການປັກຊຳ ແລະ ການສຽບຍອດແມ່ນໄດ້ຜົນດີ ຊຶ່ງເຮົາຄວນປະຕິບັດ ແລະ ສົ່ງເສີມຕໍ່ໄປ.

# ພາກທີV

## ການສະຫຼຸບ ແລະ ການແນະນຳ

1; ເປີເຊັນລອດຕາຍ

- ການສຽບຍອດມີຈຳນວນ 30ກິ່ງລອດຕາຍຢູ່ 25ກິ່ງ ຕາຍ 5ກິ່ງ ແລະ ມີເປີເຊັນລອດຕາຍ 83,33%
- ການປັກຊຳມີຈຳນວນ 50ກິ່ງ ຕາຍ 10ກິ່ງ ລອດຕາຍ40ກິ່ງ ແລະ ມີເປີເຊັນລອດຕາຍຢູ່80%
- ການຕິດຕາມີຈຳນວນ10ກິ່ງ ຕາຍ 5ກິ່ງ ລອດຕາຍ 5 ກິ່ງ ແລະ ມີເປີເຊັນລອດຕາຍ 50%

1 ການໄລ່ລຽງເສດຖະກິດ

ໃນການຜະລິດດອກເຈ້ຍນີ້ເຫັນວ່າມີລາຄາ ເມື່ອເຮົາຂະຫຍາຍຕິດແລ້ວນຳໄປປູກໃສ່ເຕົ້າກໍ່ມີລາຄາສູງເຖິງເຕົ້າລະ 20000ກີບ

1. ຜ່ານການປະຕິບັດ ແລະ ຕິດຕາມມາສາມາດສະຫຼຸບໄດ້ວ່າ: ການສຽບຍອດ, ການປັກຊຳແມ່ນດີກ່ວາການຕິດຕາ.

5.2 ການແນະນຳ

ການລົງຝຶກຫັດກໍ່ເປັນເງື່ອນໄຂນຶ່ງໃນເວລາໄປປະຕິບັດວຽກງານຕົວຈິງດັ່ງນັ້ນຈິ່ງມີການແນະນຳດີ:

1. ໃນການປັກຊຳຕົ້ນດອກເຈັຍເຮົາຕ້ອງມີເຮືອນຮົ່ມທີ່ມີການຄວບຄຸມອຸນຫະພູມ, ຄວາມຊຸ່ມທີ່ມາດຕະຖານຈິ່ງເຮັດໃຫ້ການອອກຂອງຮາກໄດ້ດີ.

2. ຖ້າມີການລົງຝຶກຫັດກ່ຽວກັບການຂະຫຍາຍພັນດອກເຈັຍແມ່ນໃຫ້ລົງໃນຊ່ວງລະດູຝົນ.

3. ຖ້າມີການຂະຫຍາຍພັນດອກເຈັຍຄັ້ງຕໍ່ໄປສະເໜີໃຫ້ເຮັດການໄຫມງ່າ, ການສຽບຍອດ.

4. ການລົງຝຶກຫັດໃນຄັ້ງຕໍ່ໄປສະເໜີໃຫ້ສຶກສາຕໍ່ກ່ຽວກັບການຈະເລີນເຕີບໂຕຂອງກິ່ງດອກເຈັຍທີ່ນຳໄປປູກ ແລະ ການບົວລະບັດຮັກສາຕື່ມ.

## ເອກະສານອ້າງອີງ


- ໄມຕີ ປະທຸມວົງ ດອກໄມ້ເສດຖະກິດ (ປະເທດໄທ )
- ປະຍູນ ພານິດສມອກ ສິງຫາ 2532 ດອກເຈ້ຍ (ປະເທດໄທ )
- ປື້ມຄູ່ມືສົ່ງເສີມການປູກປ່າ 10 ສິງຫາ 1998
- ບຸນລັ່ງງ ໄຊສົງຄາມ 2001 ການສຶກສາພືດປະດັບເຂດປ່າໂຄກ ແລະ ປ່າປະສົມ ເມືອງ ປະທຸມພອນ ແຂວງຈຳປາສັກ

ເອກະສານແນບທ້າຍ



# ວິທີການປັກຊຳກິ່ງດອກເຈ້ຍ

1. ຖົງຢາງໃສ ຂະໜາດ 4X6ນີ້ວ

2. ຫຼັງຈາກປັກຊຳແລ້ວ 7-10 ວັນກິ່ງຈະເລີ່ມແຕກຍອດໃໝ່

3. ຫຼັງຈາກປັກຊຳແລ້ວ 3-4 ອາທິດກິ່ງຊຳຈະເລີ່ມແຕກຍອດໃໝາ



# ວິ ທີການຕິດຕາດອກເຈ້ຍ

1. ປາກບາດຂອງຕົ້ນຕໍ

2. ແຜ່ນຂອງໜໍ່ຕາ

3. ການເອົາໜໍ່ຕາໃສ່ກັບປາກບາດຂອງຕົ້ນຕໍ

4. ການຄຽນເທບ



# ວິທີການສຽບຍອດຕົ້ນດອກເຈ້ຍ

1. ປາກບາດຂອງຕົ້ນຕໍ

2. ປາກບາດຂອງກິ່ງພັນ

3. ຮອຍປາກບາດຂອງຕົ້ນຕໍ ແລະ ກິ່ງພັນ

4. ການຄຽນເທບໃສ່ປາກບາດ

5. ການເອົາຖົງຢາງງອມເພື່ອບໍ່ໃຫ້ນ້ຳລະເຫີຍອາຍ

6. ການເອົາເຈ້ຍງອມເພື່ອກັນຄວາມຮ້ອນຈາກແສງແດດ

★ ໂຄງຮ່າງແຜ່ນອາຄານຂອງສູນຄົ້ນຄວ້າປ່າໄມ້



ເອກະສານແນບທ້າຍ

## ອະທິບາຍແຜ່ນວາດຂອງສູນຄົ້ນຄ້ວາປ່າໄມ້

1. ຫ້ອງການຂອງສູນຄົ້ນຄ້ວາປ່າໄມ້
2. ສາງເກັບມ້ຽນນ້ຳມັນ (ວັດຖຸໄວໄຟ)
3. ສາງເກັບມ້ຽນອຸປະກອນ
4. ເຮືອນມ້ຽນລົດ
5. ເຮືອນພັກ ( ຫໍພັກ)
6. ເຮືອນຄົວແຕ່ງກິນ
7. ຫ້ອງວິໃຈດິນ
8. ສາງເກັບມ້ຽນແກ່ນ
9. ເຮືອນພັກຜ່ອນ, ມ້ຽນອຸປະກອນຂອງຂະແໜງສວນກ້າ
10. ເຮືອນປັກຊຳ
11. ເຮືອນບົ່ມຝຸ່ນ. ຝຸ່ນມັກ
12. ເຄື່ອງຕິດຕັ້ງອຸຕຸນິຍົມ
13. ໜານກ້າແກ່ນ
14. ໜານຊຳເບ້ຍໄມ້
15. ອ່າງນ້ຳ

ຊີວະປະຫວັດຫຍໍ້

ແຂວງ ບໍລິຄໍາໄຊ

ເມືອງບໍລິຄັນ

ໂຮງຮຽນກະສິກໍາ ແລະປ່າໄມ້ ຊັ້ນກາງ

ນັກສຶກສາປີສຸດທ້າຍ ລຸ່ນທີ່ 16

- ຊື່ ແລະ ນາມສະກຸນ: ນ. ວົງເດືອນ ວົງສາຄໍາຜຸຍ
- ວັນ. ເດືອນ. ປີເກີດ 20 / 6 /1979.
- ສະຖານທີ່ເກີດ: ບ້ານຢອນ ເມືອງແປກ ແຂວງຊຽງຂວາງ
- ບ້ານຢູ່ປະຈຸບັນ: ບ້ານໂພນໄຊ ເມືອງໄຊທານີ ແຂວງກໍາແພງນະຄອນ.
- ການເຄື່ອນໄຫວໃນໄລຍະຜ່ານມາ.
- ໄລຍະແຕ່ປີ 1985 - 1991 ຮຽນຢູ່ໂຮງຮຽນປະຖົມສົມບູນໂພນໄຊ ເມືອງໄຊທານີ ແຂວງກໍາແພງນະຄອນ

.- ໄລຍະແຕ່ປີ 1992 -1997 ຮຽນຢູ່ໂຮງຮຽນມັດທະຍົມສຶກສາສົມບູນເວີນຄໍາ ເມືອງໄຊທານີ ແຂວງກໍາແພງນະຄອນ

. -ໄລຍະແຕ່ປີ 2000 - 2003 ຮຽນຢູ່ໂຮງຮຽນ ກະສິກໍາ ແລະ ປ່າໄມ້ຊັ້ນກາງ ເມືອງບໍລິຄັນ ແຂວງບໍລິຄໍາໄຊ.

- ວັນ. ເດືອນ ປີ ເຂົ້າອົງການຈັດຕັ້ງຕ່າງໆ.
- ວັນ ເດືອນ ປີ ເຂົ້າອົງການຈັດຕັ້ງແມ່ຍິງ: 10 / 4 / 1996
- ວັນ ເດືອນ ປີ ເຂົ້າອົງການຈັດຕັ້ງຊາວໜຸ່ມ: 6 / 4 / 1998.
- ວັນ ເດືອນ ປີ ເຂົ້າອົງການຈັດຕັ້ງກໍາມະບານ: 19 / 12 / 2002.

ສູນຄົ້ນຄວ້າປ່າໄມ້
ຫ້ອງສະໝຸດ
ເລກທະບຽນ: 0445
ເລກໝູ່ໜັງສື: 267-074